ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສຳນັກງານຂໍ້ມູນຕ້ານການຟອກເງິນ

ເລກທີ: 76 /ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 09 ມັງກອນ 2025

## ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການ ທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ຜູ້ໃຫ້ບໍລິການ ຊັບສິນເໝືອນຈິງ, ທຸລະກິດ ຊື້-ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້-ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດກາຊີໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ ທີ່ນັບຖື,

**ເລື່ອງ:** ການປະກາດນຳໃຊ້ ຂໍ້ຕົກລົງວ່າດ້ວຍ ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ).

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024.

ສຳນັກງານຂໍ້ມູນຕ້ານການຟອກເງິນ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງ ສະຖາບັນການເງິນ ລວມມີ: ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ຜູ້ໃຫ້ບໍລິການຊັບສິນເໝືອນຈິງ; ແລະ ສະຖາບັນທີ່ບໍ່ນອນໃນຂະແໜງການເງິນ ລວມມີ: ທຸລະກິດ ຊື້-ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້-ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດກາຊີໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ ຊາບວ່າ ປັດຈຸບັນ ສປປ ລາວ ໄດ້ສຳເລັດການປັບປຸງ ແລະ ຮັບຮອງ ຂໍ້ຕົກລົງວ່າດ້ວຍ ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 21/ຄຕຟງ, ລົງວັນທີ 26 ພະຈິກ 2024 (ສາມາດດາວໂຫຼດໄຟລເອກະສານຜ່ານເວັບໄຊທ໌ ສຕຟງ www.amlio.gov.la). ສະນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດຕາມເນື້ອໃນຈິດໃຈຂ້າງເທິງນີ້ດ້ວຍ.

ວ່າການຫົວໜ້າສຳນັກງານ

ວິນຄຳ ລຸນທອນ